**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການຄ້າຕ່າງປະເທດ ເລກທີ 1633 /ກຄຕ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2025

# ແຈ້ງການ

**ເຖິງ:** – ກົມພາສີ, ກະຊວງການເງິນ.

– ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ.

– ພະແນກ ອຸດສາຫະກໍາ ແລະ ການຄ້າ ແຂວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຖອນໃບຢັ້ງຢືນການລົງທະບຽນຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມການຄ້າຕ່າງປະເທດ ກະຊວງ ອຸດສາຫະກໍາ ແລະ ການຄ້າ ເລກທີ 2080/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023;
- ອີງຕາມ ແຈ້ງການດັດສົມຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 2972/ຫອຄ, ລົງວັນທີ 31 ຕຸລາ 2024 ແລະ ແຈ້ງການສືບຕໍ່ອາຍຸໃບຢັ້ງຢືນການລົງທະບຽນຜູ້ນໍາເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ເລກທີ 1284/ກຄຕ, ລົງວັນທີ 13 ມີນາ 2025.

ກົມການຄ້າຕ່າງປະເທດ (ກຄຕ), ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ຜ່ານການຈັດຕັ້ງປະຕິບັດແຈ້ງການຂອງ ກົມ ຄຕ ສະບັບເລກທີ 1284/ກຄຕ, ລົງວັນທີ 13 ມີນາ 2025 ເຫັນວ່າ ບໍລິສັດຈໍານວນໜຶ່ງ ຍັງບໍ່ໄດ້ມາສືບຕໍ່ອາຍຸ ໃບຢັ້ງຢືນການລົງທະບຽນຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການ ບໍລິການ ນໍາເຈົ້າໜ້າທີ່ຕາມແຈ້ງການ. ສະນັ້ນ, ກົມ ຄຕ ຂໍແຈ້ງມາຍັງພາກສ່ວນກ່ຽວຂ້ອງ ກ່ຽວກັບ ການຖອນສິດ ແລະ ໃບຢັ້ງຢືນການລົງທະບຽນຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ຂອງບັນດາບໍລິສັດ ທີ່ມີລາຍຊື່ ຄັດຕິດມານີ້ **(ລາຍຊື່ບໍລິສັດທີ່ຖືກຖອນສິດ ແລະ ໃບຢັ້ງຢືນ).**

ບໍລິສັດທີ່ຖືກຖອນສິດ ແລະ ໃບຢັ້ງຢືນດັ່ງກ່າວ ແມ່ນຈະບໍ່ມີສິດເປັນຜູ້ນໍາເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ແຕ່ຍັງສາມາດດໍາເນີນກິດຈະການພາຍໃນອື່ນໄດ້. ໃນກໍລະນີບໍລິສັດຫາກມີຄວາມ ປະສົງຈະຂໍສືບຕໍ່ໃນການດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ຕ້ອງໄດ້ປະກອບເອກະສານຍື່ນຫາ ກົມການຄ້າຕ່າງປະເທດ ຫຼື ຂະແໜງການຄ້າຕ່າງປະເທດ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ເພື່ອ ພິຈາລະນາອະນຸມັດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການຄ້າຕ່າງປະເທດ

ນ. ມະນີອອນ ວົງໄຊ

**ເອກະສານ**

**ລາຍຊື່ບໍລິສັດທີ່ເພີກຖອນ**